# Mekong River Commission

P.O. Box 6101, Vientiane 01000, Lao PDR
Telephone: (856-21) 263 263   Facsimile: (856-21) 263 264
Email: mrcs@mrcmekong.org  Website: www.mrcmekong.org


## *ບົດອອກຂ່າວ*

MRC No.10/07

*ຄະນະກຳມາທິການແມ່ນ້ຳຂອງສາກົນກຳນົດແຜນງານເພື່ອອານາຄົດ*

**ວຽງຈັນ, ສປປ ລາວ**
**29 ສິງຫາ 2007**

ຄວາມຮູ້ ແລະ ແຜນພັດທະນາອ່າງ ແມ່ນ 2 ຫົວຂໍ້ຫລັກທີ່ໄດ້ປຶກສາຫາລື ໃນກອງປະຊຸມ ຄັ້ງທີ່ 26 ຂອງຄະນະກຳມະການຮ່ວມ ຂອງຄະນະກຳມາທິການແມ່ນ້ຳຂອງສາກົນ (MRC) ທີ່ຈັດຂື້ນທີ່ວຽງຈັນ ໃນວັນນີ້.

ທ່ານ ຫງຽນ ຮົງ ຕວນ(Mr. Nguyen Hong Toan) ປະທານ ຄະນະກຳມະການຮ່ວມ ປະຈຳປີ 2007/2008 ແຈ້ງຕໍ່ທີ່ປະຊຸມຊາບວ່າ ໃນຕົ້ນປີນີ້ ແຜນພັດທະນາອ່າງ ໄລຍະ 2 ໄດ້ເລີ້ມປະຕິບັດ. ກອງປະຊຸມໄດ້ຄາດຫວັງເຖິງຄວາມກ້າວໜ້າຕາມຈຸດມຸ້ງໝາຍ. ທ່ານໄດ້ກ່າວຕໍ່ໄປວ່າ ແຜນງານໃໝ່ຂອງ MRC ຄືແຜນງານຄຸ້ມຄອງຂໍ້ມູນຂ່າວສານ ແລະ ຄວາມຮູ້ກໍ່ໄດ້ປະຕິບັດ ເຕັມຮູບແບບໃນຕົ້ນປີ 2007 ນີ້ ແລະ ແຜນງານດັ່ງກ່າວແມ່ນມີຄວາມສຳຄັນຫລາຍ ຕໍ່ຄວາມກ້າວໜ້າໃນການແລກ ປ່ຽນຄວາມຮູ້ ເຊິ່ງເປັນກະດູກສັນຫລັງຂອງອົງການ.

ທ່ານ ຕວນ ໄດ້ກ່າວຕ້ອນຮັບ ບັນດາຜູ້ແທນ ຂອງ 4 ປະເທດສະມາຊິກ ຄະນະກຳມາທິການແມ່ນ້ຳຂອງສາກົນ ( ກຳປູເຈັຽ, ສປປ ລາວ, ໄທ ແລະ ຫວຽດນາມ) ພ້ອມທັງຜູ້ສັງເກດການຈາກບັນດາອົງການຈັດຕັ້ງຕ່າງໆທີ່ມີສ່ວນຮ່ວມ ເຂົ້າຮ່ວມກອງປະຊຸມ ເພື່ອປຶກສາຫາລື ເຖິງຜົນງານທີ່ໄດ້ຮັບຂອງ ຄະນະກຳມາທິການແມ່ນ້ຳຂອງສາກົນ(MRC) ໃນປີຜ່ານມາ ແລະ ແຜນວຽກໃນ 6 ເດືອນ ຕໍ່ໜ້າ.

ປະທານຄະນະກຳມະການຮ່ວມຄົນເກົ່າປະຈຳປີ 2006/2007 ພະນະທ່ານ ສິນ ນີນີ (H.E Mr. Sin Niny), ຮອງປະທານຄະນະກຳມະການ ແມ່ນ້ຳຂອງແຫ່ງຊາດ ກຳປູເຈັຽ ບອກທີ່ກອງປະຊຸມວ່າ ໃນໄລຍະປີຜ່ານມາ ຄະນະກຳມາທິການແມ່ນ້ຳຂອງສາກົນ ໄດ້ເຮັດສຳເລັດ ແລະ ພິມເຜີຍແຜ່ ແຜນຍຸດທະສາດຂອງ ຄະນະກຳມາທິການແມ່ນ້ຳຂອງສາກົນ(MRC) ແຕ່ປີ 2006-2010, ພາຍຫລັງທີ່ໄດ້ຮັບ ການອະນຸມັດໃນກອງປະຊຸມຄັ້ງທີ່ 13 ຂອງສະພາຄະນະກຳມາທິການແມ່ນ້ຳຂອງສາກົນ(MRC) ໃນເດືອນ ທັນວາ 2006 ຜ່ານມາ.

ໃຊ້ເວລາເປັນປີ ຈິ່ງຈະໄດ້ເຫັນຜົນປະໂຫຍດ ເມື່ອ MRC ໄດ້ນຳໃຊ້ຂະບວນການກວດກາຈາກອົງການກວດກາ ທີ່ເປັນເອກະລາດ ເຂົ້າມາທຳການກວດກາ ກອງເລຂາ MRC ແລະ ກອງເລຂາຄະນະກຳມະການແມ່ນ້ຳຂອງ ແຫ່ງຊາດ (NMCs) ເຊິ່ງໄດ້ສະເໜີຕໍ່ກອງປະຊຸມສະພາ MRC ຄັ້ງທີ່ 13. ໃນການກວດກາດັ່ງກ່າວນີ້

ແມ່ນໄດ້ມີການແນະນຳຫລາຍໆບັນຫາໄວ້  ເຊິ່ງເລັ່ງໃສ່ແນວທາງທີ່ເຮັດໃຫ້ທັງສອງ ກອງເລຂາແມ່ນ້ຳຂອງສາກົນ (MRCs) ແລະ ກອງເລຂາ ແມ່ນນ້ຳຂອງແຫ່ງຊາດ (NMCs) ມີປະສິດທິພາບຫລາຍຂື້ນ ແລະ ສົ່ງເສີມແຜນການທັງ ໝົດ ໃຫ້ບັນດາປະເທດ ເປັນເຈົ້າຂອງ, ຊີ້ນຳ ແລະ ຄຸ້ມຄອງອົງການໂດຍປະເທດສະມາຊິກ, ເຊິ່ງຈະໄດ້ຮັບຜົນໂດຍ ການຍຶດໝັ້ນບົນເສັ້ນທາງຂອງ MRC ໄປສູ່ຄວາມເປັນເຈົ້າຂອງ ໃນທີ່ສຸດ. ຄະນະກຳມະການຮ່ວມໄດ້ອະນຸມັດ ຫລາຍໆຂໍ້ສະເໜີຈາກການກວດກາດັ່ງກ່າວ ແລະ ກອງປະຊຸມໄດ້ຮັບຟັງການລາຍງານເຖິງຄວາມຄືບໜ້າ ໃນການ ປະຕິບັດ.

ວ່າການຫົວໜ້າກອງເລຂາຄະນະກຳມາທິການແມ່ນ້ຳຂອງສາກົນ(MRCs) , ທ່ານ ໂດ ແມັງ ຮຸງ (Mr. Do Manh Hung) ໄດ້ສະເໜີບົດລາຍງານ ຄວາມຄືບໜ້າວຽກງານ ຂອງບັນດາ ແຜນງານຂອງ MRC. ຈາກນັ້ນ ກອງປະຊຸມກໍ່ໄດ້ມີການຄົ້ນຄ້ວາ ກ່ຽວກັບແຜນພັດທະນາອ່າງ, ການເດີນເຮືອ, ການ ຄຸ້ມຄອງ ແລະຫລຸດຜ່ອນໄພນ້ຳຖ້ວມ, ການປະມົງ, ຊົນລະປະທານ, ການຄຸ້ມຄອງອ່າງໂຕ່ງ, ການຄຸ້ມຄອງຂໍ້ມູນ ຂ່າວສານ ແລະຄວາມຮູ້ ແລະ ແຜນງານການຕິດຕາມສິ່ງແວດລ້ອມ. ພ້ອມນັ້ນ ກອງປະຊຸມກໍ່ຍັງໄດ້ຄົ້ນຄ້ວາເຖິງ ຄວາມເປັນໄປໄດ້ໃນການຫາທຶນເພື່ອແຜນງານໃໝ່ ຄືແຜນງານການຄຸ້ມຄອງໄພແຫ້ງແລ້ງ. ຈາກນັ້ນ ກອງປະຊຸມໄດ້ ຮັບຟັງການລາຍງານກ່ຽວກັບສະພາບຂອງອຸທົກກະສາດໃນອ່າງແມ່ນ້ຳຂອງຕອນໃຕ້.

ບັນດາຜູ້ແທນຈາກອົງການຈັດຕັ້ງຕ່າງໆທີ່ເປັນຜູ້ສັງເກດການຂອງ MRC ກໍ່ໄດ້ເຂົ້າຮ່ວມກອງປະຊຸມດ້ວຍ. ຄະນະກຳ ມະການຮ່ວມຂອງ MRC ປະກອບດ້ວຍສະມາຊິກ 1 ທ່ານຈາກແຕ່ລະປະເທດສະມາຊິກ ໃນລະດັບ ບໍ່ຕ່ຳກ່ວາຫົວ ໜ້າກົມ. ຮັບຜິດຊອບໃນການປະຕິບັດນະໂຍບາຍ ແລະ ຂໍ້ຕົກລົງຂອງສະພາ MRC ແລະ ຊີ້ນຳ ວຽກງານ ຂອງກອງ ເລຂາ ຄະນະກຳມາທິການແມ່ນ້ຳຂອງສາກົນ.

- **ຂໍ້ມູນເພີ້ມເຕີມ, ເຊີນຕິດຕໍ່ກັບ**: Virginia Addison, Communications Officer, Tel: 856 21 263 263 Ext 1122.  Mobile: (856) 20 559 9139    Fax: (85621) 263 264 Email: virginia@mrcmekong.org